# ຖາມຂ່າວເຈົ້າພາບ **second REUION**

ໂດຍ: ສາວຫຼັກເຈັດ

ຄວາມສັມພັນອັນຊາບຊຶ້ງ          ຄັ້ງທີນຶ່ງນັ້ນສົມປອງ
ງານທີສອງຈະລຽນຕິດ          ຕໍ່ມາບໍ່ພໍກ້າວ
ເຈົ້າພາບເຮົາເພິ່ນຕຽມຖ້າ          ຍິນມາລາເອື້ອຍຈັດແຈ່ງ
ສ່ວນອາຈານເງິນແທ່ງ     ແສງໄຟອັນເຂັ້ມກ້າ ສເນີດ້ານດັ່ງເດີມ ທ່ານເອີຍ

ຣີຢູນຽນທີນຶ່ງເລີ້ມ          ທ່ານເຕີມຕື່ມຄຳປາສັຍ
ຝັງຢູ່ໃນດວງຈິດ          ໃຫ້ຄິດນຳຄາວນັ້ນ
ຄິດເຫັນສັມພັນແຫນ້ນ ແດນຫຼັກເຈັດເຮົາເຄີຍຮ່ວມ
ຈຶ່ງລວມກັນທຸກທົ່ວຫນ້າ     ໃຫ້ມາພໍ້ອີກເທື່ອສອງ

ສ່ວນວ່າອ້າຍເອື້ອຍນ້ອງ     ທາງຝ່າຍການາດາ
ເຈົ້າພາບສັດທາໃສ          ຊິຮ່ວມໃຈໃນງານນີ້
ແສນດີໃຈທາງນ້ອງ          ຫວັງຄອງຢາກພົບຫມູ່
ຢາກເຫັນຊູ້ ຜູ້ບໍ່ທັນໄດ້ເວົ້າ ຊິເປັນຫນ້າຜູ້ຈັ່ງໃດ ເດນໍ

ທາງເຈົ້າພາບເພິ່ນບອກໄວ້ ມີບ່າວໃຫຍ່ກະເປົາຫນັກ ໃດເດີ

ສົມສັກ ສີຫາວົງ ຜູ້ບໍ່ເຄີຍປະສົງຊ້ອນ
ມີແຕ່ນອນດຽວແລ້ງ ຍາມມື້ແລງຂາດຄູ່
ແຕ່ມີໃຈຮັກຫມູ່ ເປັນຄົນຢູ່ນິ້ງໆ ຜູ້ຍິງນັ້ນເພິ່ນບໍ່ສົນ

ວັນທອງຜູ້ຄິດຄົ້ນ ດົນຕຣີໃຫມ່ໄຟແຮງ
ຣາຄາແພງບໍ່ເຄີຍຕິ ວ່າແຕ່ໃຈປະສົງຕັ້ງ
ພະລັງໃຈຜູ້ຄຽງຂ້າງ ນາງໄພທູນຜູ້ເນື້ອອຸ່ນ
ບຸນແຕ່ແຖນ ແນນແຕ່ຟ້າ ໄດ້ມາຊ້ອນເພື່ອນຄຣູ ອິດສາເດ!

ອ້າຍທອງຄຳຜູ້ຮູ້ ໄດ້ຄຽງຄູ່ເອື້ອຍຫນູຮັກ
ຈັກແມ່ນບຸນແຕ່ປາງໃດ ຈຶ່ງຮ່ວມໃຈແຕ່ຄາວນັ້ນ
ພວງພັນຄອງກາຍອ້າຍ ພູມີຜູ້ຍິ້ມງ່າຍ
ເວີນມີຊາຍຜູ້ເຈົ້າຊູ້ ສາວຄຣູນັ້ນເພິ່ນຊ່າງລືມ ເດບໍ

ນາງຮູ້ສຶກປາບປື້ມ ຊຶມຢູ່ໃນໃຈ
ຂ່າວລາຍການເຮົາໄປ ໃຫ້ທົ່ວໂລກກວ້າງ
ທິດທາງໃດຄຣູເນົາຢັ້ງ ພະລັງໃຈໃຫ້ສານສົ່ງ ກັນເດີ
ໃຈປະສົງຢາກໃຫ້ຮູ້ ງານຄຣູນີ້ອີກເທື່ອສອງ ເພື່ອນເອີຍ

ສ່ວນພວກນ້ອງຢູ່ພີ້　　ມີເອື້ອຍຮິ່ມລວມທັງຫນູ
ຜູ້ສຳຄັນຄືຂັນເງິນ　　ເພິ່ນຜ່ານມາໄດ້ຮຽນຮູ້
ບັນດາຄູຮເຮົາຫຼາຍຫນ້າ　　ອິນທະຫວາຜູ້ແຕ້ມແຕ່ງ
ເປັນແຮງໃຈອັນເຂັ້ມກ້າ　　ບັນຫາຂ້ອງໃຫ້ຍື່ນມາ　　ເອື້ອຍຍິນເອີຍ

ໂດຍ: ສາວຫຼັກ ໆ ເມັດນ້ຳຕານເມືອງສວັນ